# ຢາວັກຊີນຕ້ານ COVID-19 –

# ຂໍ້ມູນກ່ຽວກັບສຸຂະພາບແລະຄວາມປອດໄພໃນການເຮັດວຽກສຳລັບພະນັກງານ

## ຂ້ອຍສາມາດຖືກບັງຄັບໃຫ້ສັກຢາວັກຊີນໄດ້ບໍ?

ທ່ານບໍ່ສາມາດຖືກບັງຄັບໃຫ້ສັກຢາວັກຊີນຫຼືໄປເຮັດຂັ້ນຕອນປິ່ນປົວໃດໆທີ່ທ່ານບໍ່ເຫັນພ້ອມ.

ຢ່າງໃດກໍຕາມ, ໃນບາງກໍລະນີ, ອາດຈະມີ ຄຳສັ່ງດ້ານສຸຂະພາບຕໍ່ສາທາລະນະຊົນ ເຊິ່ງລະບຸວ່າທ່ານຕ້ອງສັກຢາວັກຊີນເພື່ອເຮັດວຽກໃນອຸດສາຫະກຳທີ່ມີຄວາມສ່ຽງສູງ. ໃຫ້ຮູ້ທັນກັບຄຳແນະນຳຂອງພະແນກສາທາລະນະສຸກຂອງທ່ານ.

## ນາຍຈ້າງຂອງຂ້ອຍສາມາດບັງໃຫ້ຂ້ອຍສັກຢາວັກຊີນຕ້ານ COVID-19 ພາຍໃຕ້ກົດໝາຍສຸຂະພາບແລະຄວາມປອດໄພໃນການເຮັດວຽກບໍ?

ສຳລັບພະນັກງານສ່ວນໃຫຍ່ແລ້ວ, ນາຍຈ້າງຂອງທ່ານບໍ່ສາມາດບັງໃຫ້ທ່ານສັກຢາວັກຊີນພາຍໃຕ້ກົດໝາຍກ່ຽວກັບສຸຂະພາບແລະຄວາມປອດໄພໃນການເຮັດວຽກ.

ຢ່າງໃດກໍດີ, ອາດຈະມີຂໍ້ຍົກເວັ້ນ, ໂດຍສະເພາະຖ້າທ່ານເຮັດວຽກຢູ່ໃນອຸດສາຫະກຳທີ່ຄວາມສ່ຽງສູງຕໍ່ການສຳຜັດກັບພະຍາດ. ນອກນີ້ ກໍອາດມີ ຄຳສັ່ງດ້ານສຸຂະພາບຕໍ່ສາທາລະນະຊົນ ທີ່ບັງວ່າທ່ານຕ້ອງໄດ້ສັກຢາວັກຊີນ.

ຖ້ານາຍຈ້າງຂອງທ່ານບັງວ່າທ່ານຕ້ອງສັກຢາວັກຊີນ, ເຂົາເຈົ້າຕ້ອງໃຫ້ຂໍ້ມູນແລະເອກະສານໃຫ້ທ່ານໃນການຕັດສິນໃຈທີ່ແຈ້ງບອກນີ້. ໃຫ້ລົມກັບທ່ານໝໍຂອງທ່ານຖ້າທ່ານມີຄວາມກັງວົນ. ໃຫ້ພົວພັນຫາ ຜູ້ຄວບຄຸມກົດລະບຽບດ້ານສຸຂະພາບແລະຄວາມປອດໄພໃນການເຮັດວຽກ ຂອງທ່ານ, ຜູ້ຕາງໜ້າດ້ານສຸຂະພາບແລະຄວາມປອດໄພ (HSR) ຫຼືອົງການຄຸ້ມຄອງພະນັກງານ ເພື່ອຂໍຄວາມຊ່ວຍເຫຼືອ.

ສຳລັບຂໍ້ມູນກ່ຽວກັບສິດທິໃນບ່ອນເຮັດວຽກຂອງທ່ານ, ໃຫ້ໂອ້ລົມກັບ ຜູ້ຄຸ້ມຄອງດ້ານການເຮັດວຽກທີ່ຍຸຕິທຳ.

## ສ່ວນພາລະໜ້າທີ່ຂອງຂ້ອຍໃນຖານະພະນັກງານພາຍໃຕ້ກົດໝາຍກ່ຽວກັບສຸຂະພາບແລະຄວາມປອດໄພໃນການເຮັດວຽກເດ? ອັນນີ້ ໝາຍຄວາມວ່າຂ້ອຍຕ້ອງສັກຢາວັກຊີນບໍ?

ໃນຖານະພະນັກງານ, ທ່ານຕ້ອງດູແລຕົນເອງຢ່າງສົມເຫດສົມຜົນແລະບໍ່ເຮັດສິ່ງໃດທີ່ຈະໄປເປັນຜົນຮ້າຍຕໍ່ສຸຂະພາບແລະຄວາມປອດໄພຂອງຄົນອື່ນໃນບ່ອນເຮັດວຽກ. ທ່ານຕ້ອງປະຕິບັດຕາມຄຳສັ່ງກ່ຽວກັບສຸຂະພາບແລະຄວາມປອດໄພທີ່ສົມເຫດສົມຜົນຈາກນາຍຈ້າງຂອງທ່ານຫຼາຍເທົ່າທີ່ທ່ານຈະສາມາດເຮັດໄດ້ຕາມສົມເຫດສົມຜົນ.

ຖ້າວ່າມີກົດໝາຍຫຼືຄຳສັ່ງດ້ານສຸຂະພາບຕໍ່ສາທາລະນະຊົນທີ່ບັງອອກມາວ່າທ່ານຕ້ອງໄດ້ສັກຢາວັກຊີນ, ທ່ານກໍອາດຈະຕ້ອງສັກຢາວັກຊີນເພື່ອເຮັດວຽກ, ຫຼືສືບຕໍ່ເຮັດວຽກ, ໃນອຸດສາຫະກຳນັ້ນ.

## ນາຍຈ້າງຂ້ອຍຕ້ອງລົມນຳຂ້ອຍກ່ອນບໍ່ກ່ອນຈະບັງໃຫ້ມີການສັກຢາວັກຊີນໃນບ່ອນເຮັດວຽກຂອງຂ້ອຍ?

ແມ່ນແລ້ວ. ຖ້ານາຍຈ້າງຂອງທ່ານກຳລັງພິຈາລະນາອອກນະໂຍບາຍບັງຄັບໃຫ້ສັກຢາວັກຊີນ, ເຂົາເຈົ້າຕ້ອງປຶກສາກັບທ່ານແລະຜູ້ຕາງໜ້າດ້ານສຸຂະພາບແລະຄວາມປອດໄພຂອງທ່ານ, ຖ້າວ່າມີ, ກ່ອນຈະລົງມືປະຕິບັດ. ທ່ານຕ້ອງບອກເຂົາເຈົ້າໃຫ້ຊາບ ຖ້າວ່າມີເຫດຜົນ ວ່າເປັນຫຍັງທ່ານຈຶ່ງສັກຢາວັກຊີນບໍ່ໄດ້.

## ຂ້ອຍໄດ້ສັກຢາວັກຊີນແລ້ວ. ຂ້ອຍຍັງຈະຕ້ອງລະມັດລະວັງເຊັ່ນຢູ່ຫ່າງຈາກຄົນອື່ນແລະລ້າງມືຢູ່ບໍ?

ແມ່ນແລ້ວ. ຢາວັກຊີນທີ່ປອດໄພແລະມີປະສິດທິຜົນແມ່ນພາກສ່ວນໜຶ່ງໃນການຮັກສາຊຸມຊົນໃຫ້ປອດໄພແລະມີສຸຂະພາບທີ່ດີ. ໃຫ້ສືບຕໍ່ປະຕິບັດຂັ້ນຕອນດັ່ງຂ້າງລຸ່ມນີ້ເພື່ອປ້ອງກັນການແພ່ລະບາດຂອງ COVID-19:

- ປະຕິບັດຕາມຄຳສັ່ງດ້ານສຸຂະພາບຕໍ່ສາທາລະນະຊົນ
- ຢ່າໄປເຮັດວຽກຖ້າທ່ານຮູ້ສຶກບໍ່ສະບາຍ, ຖ້າມີອາການຂອງ COVID-19 ຫຼືຖືກບອກໃຫ້ຢູ່ເຮືອນໂດຍເຈົ້າໜ້າທີ່ທາງການແພດ.
- ໃຫ້ເຮັດເທົ່າທີ່ສາມາດເຮັດໄດ້ຢ່າງສົມເຫດສົມຜົນໃນການເຮັດວຽກຢ່າງປອດໄພ, ລວມເຖິງການປະຕິບັດຕາມຂໍ້ບັງຄັບຕ່າງໆກ່ຽວກັບ COVID-19 ເຊັ່ນຕ້ອງຢູ່ຫ່າງກັນແລະຕ້ອງທຳຄວາມສະອາດ
- ປະຕິບັດຕາມຄຳສັ່ງຕ່າງໆ
- ໃຫ້ຖາມຖ້າທ່ານບໍ່ແນ່ໃຈວ່າຈະເຮັດວຽກຢ່າງໃດໃຫ້ປອດໄພ
- ໃຫ້ໃຊ້ອຸປະກອນປ້ອງກັນສ່ວນຕົວ (PPE) ເຊັ່ນໃສ່ຖົງມືຕາມແບບທີ່ທ່ານໄດ້ຖືກຝຶກມາຫຼືຖືກສັ່ງໃຫ້ໃສ່ຖົງມື
- ໃຫ້ລາຍງານສະພາບການໃດໆທີ່ບໍ່ປອດໄພກັບຫົວໜ້າຂອງທ່ານຫຼືຕໍ່ຜູ້ຕາງໜ້າດ້ານສຸຂະພາບແລະຄວາມປອດໄພ

# ຂໍ້ມູນເພີ່ມເຕີມ

- ຂໍ້ມູນກ່ຽວກັບສຸຂະພາບແລະການສັກຢາວັກຊີນ – ກະຊວງສາທາລະນະສຸກ
- ສຸຂະພາບແລະຄວາມປອດໄພໃນບ່ອນເຮັດວຽກ - ໂຄງການເຮັດວຽກຢ່າງປອດໄພແຫ່ງປະເທດອອສເຕຣເລັຍ
- ສິດທິໃນບ່ອນເຮັດວຽກ – ຜູ້ຄຸ້ມຄອງດ້ານການເຮັດວຽກທີ່ຍຸຕິທຳ